**ມິຊຊາອາທິດທີ 2 ກຳນົດທຳມະດາ ປີ C**

**ວັນທີ 20 ມັງກອນ 2019**



**ພຣະວໍລະສານໂດຍນັກບຸນຢວງ 2, 1-12**

ໃນເວລານັ້ນ, ຢູ່ບ້ານການາແຂວງກາລີເລມີງານວິວາຫະມຸງຄຸນ. ພຣະມານດາຂອງພຣະເຢຊູເຈົ້າກໍຢູ່ໃນງານນີ້ດ້ວຍ. ພຣະເຢຊູເຈົ້າພ້ອມກັບພວກສາວົກກໍໄດ້ຖືກເຊີນມາໃນງານນີ້.

ພໍດີຂາດເຂີນເຫລົ້າອະງຸ່ນ. ພຣະມານດາຈຶ່ງທູນພຣະອົງວ່າ: ພວກເຂົາໝົດເຫລົ້າອະງຸ່ນແລ້ວ. ພຣະເຢຊູເຈົ້າຊົງຕອບວ່າ: ຍາແມ່ເອີຍ! ເວລາຂອງເຮົາຍັງບໍ່ທັນມາເຖິງ. ພຣະມານດາຈຶ່ງບອກຄົນໃຊ້ວ່າ: ເພິ່ນບອກຫຍັງໃຫ້ປະຕິບັດຕາມເນີ.

ຢູ່ທີ່ນັ້ນມີໄຫຫີນຢູ່ຫົກໜ່ວຍສຳລັບໃສ່ນ້ຳລ້າງຕົວຕາມປະເພນີຂອງພວກຢູເດວ. ໄຫໜ່ວຍໜຶ່ງໃສ່ນ້ຳໄດ້ສອງສາມຫາບ.

ພຣະເຢຊູເຈົ້າຈຶ່ງສັ່ງບອກວ່າ: ຈົ່ງຕັກນ້ຳໃສ່ໄຫເຫລົ່ານີ້ໃຫ້ເຕັມ. ພວກຄົນໃຊ້ກໍໄດ້ຕັກນ້ຳໃສ່ຈົນເຕັມພຽບ. ພຣະອົງເລີຍສັ່ງອີກວ່າ: ດຽວນີ້ຈົ່ງຕັກເອົາໄປຖວາຍເຈົ້າພາບ. ພວກເຂົາກໍໄດ້ຕັກເອົາໄປ. ພໍເຈົ້າພາບໄດ້ຊີມນ້ຳທີ່ໄດ້ກາຍເປັນເຫລົ້າອະງຸ່ນໂດຍບໍ່ຮູ້ວ່າເຫລົ້ານັ້ນມາແຕ່ໃສ. ສ່ວນພວກຄົນໃຊ້ຮູ້ເລື່ອງດີ. ເຈົ້າພາບຈຶ່ງຮຽກເຈົ້າບ່າວມາເວົ້າວ່າ: ໃຜໆກໍເຄີຍເອົາເຫລົ້າແນວດີມາກິນກ່ອນ ແລະເມື່ອເວລາມືນເມົາແລ້ວ, ຈຶ່ງເອົາເຫລົ້າແນວບໍ່ແຊບອອກມາ. ສ່ວນເຈົ້າ, ເຈົ້າໄດ້ຮັກສາເຫລົ້າແນວດີໄວ້ຈົນເຖິງບັດນີ້.

ນີ້ແມ່ນອັດສະຈັນອັນຕົ້ນທີ່ພຣະເຢຊູເຈົ້າໄດ້ຊົງກະທຳຢູ່ບ້ານການາ, ແຂວງກາລີເລ. ພຣະອົງໄດ້ຊົງສຳແດງສີມຸງຄຸນຂອງພຣະອົງອອກມາແລະພວກສາວົກກໍໄດ້ເຊື່ອໃນພຣະອົງ. ຫລັງຈາກນັ້ນ, ພຣະອົງກໍໄດ້ສະເດັດໄປເມືອງກາຟານາອຸມພ້ອມດ້ວຍພຣະມານດາ, ຍາດພີ່ນ້ອງແລະພວກສາວົກ. ແຕ່ບໍ່ໄດ້ປະທັບຢູ່ທີ່ນັ້ນຫລາຍວັນ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ຢງ 2, 1-11**

ເມື່ອເວລາຟັງພຣະວໍລະສານຕອນນີ້, ສິ່ງທີ່ພວກເຮົາຮັບຮູ້ໄດ້ຄື ພຣະນາງມາຣີອາ, ພຣະເຢຊູເຈົ້າແລະພວກສາວົກໄດ້ຖືກເຊີນມາໃນງານສົມຣົດຢູ່ບ້ານການາ, ແຂວງກາລີເລ. ສ່ວນສິ່ງທີ່ພວກເຮົາບໍ່ຮູ້ຈັກຄື ເຈົ້າພາບຂອງງານສົມຣົດນີ້ແມ່ນໃຜ? ເຈົ້າບ່າວຊື່ວ່າແນວໃດ? ແລະໃຜເປັນເຈົ້າສາວ? ຈຳນວນແຂກທີ່ຮັບເຊີນມີຈັກຄົນ?

ສິ່ງທີ່ພຣະວໍລະສານບອກພວກເຮົາຢ່າງຈະແຈ້ງຢ່າງໜຶ່ງຄືງານສົມຣົດນີ້ໝົດເຫລົ້າອະງຸ່ນແລ້ວ. ໃນງານລ້ຽງງານວິວາສົມຣົດຫາກບໍ່ມີເຫລົ້າກໍເໝືອນກັບບໍ່ມີຄວາມມ່ວນຊື່ນ. ແລະຜູ້ທີ່ຮູ້ຈັກທຳອິດເຖິງການຂາດເຫລົ້າຂອງງານສົມຣົດນີ້ຄືແມ່ພຣະມາຣີອາມານດາຂອງພຣະເຢຊູເຈົ້າ. ແທນທີ່ແມ່ພຣະຈະໄປບອກກັບເຈົ້າພາບໃຫ້ສັ່ງຄົນໄປຊື້ເຫລົ້າມາຕື່ມ ຫລືບໍ່ດັ່ງນັ້ນກໍຕ້ອງຊອກຫາວິທີອື່ນເພື່ອແກ້ໄຂ ແຕ່ແມ່ພຣະມາຣີອາພັດໄປບອກກັບພຣະເຢຊູເຈົ້າວ່າ: ພວກເຂົາໝົດເຫລົ້າອະງຸ່ນແລ້ວ. ຍ້ອນຫຍັງ? ອາດຈະແມ່ນຍ້ອນແມ່ພຣະຮູ້ວ່າໃນຍາມທີ່ຄັບຂັນ, ຈຳເປັນ, ໃນຍາມທີ່ມະນຸດຕ້ອງການຄວາມຊ່ວຍເຫລືອຢ່າງທັນດ່ວນນັ້ນ ຜູ້ທີ່ສາມາດຊ່ວຍເຫລືອພວກເຂົາໄດ້ຄືພຣະເຢຊູກຣິສໂຕ, ພຣະບຸດຂອງພຣະເຈົ້າ.

ຫລັງຈາກທີ່ໄດ້ບອກໃຫ້ພຣະເຢຊູເຈົ້າຮັບຮູ້ເຖິງຄວາມຂັດສົນຂອງງານສົມຣົດແລ້ວ ແມ່ພຣະກໍບອກໃຫ້ພວກຄົນໃຊ້ໃນເຮືອນເຈົ້າພາບໃຫ້ທຳຕາມສິ່ງທີ່ພຣະເຢຊູເຈົ້າຊີ້ບອກ. ແລະໃນທີ່ສຸດພຣະເຢຊູເຈົ້າກໍສັ່ງໃຫ້ພວກຄົນໃຊ້ຕັກນ້ຳໃສ່ໄຫແລະນ້ຳນັ້ນກໍໄດ້ກາຍເປັນເຫລົ້າອະງຸ່ນທີ່ແຊບນົວ. ແລະທຸກຄົນກໍໄດ້ສືບຕໍ່ຄວາມມ່ວນຊື່ນໃນງານວິວາຫະມຸງຄຸນນັ້ນ.

ຖ້າພວກເຮົາສັງເກດດີໆໃນງານສົມຣົດນີ້ກໍຈະເຫັນວ່າ ນັກບຸນຢວງຜູ້ຂຽນພຣະວໍລະສານຢາກຍົກໃຫ້ພວກເຮົາເຫັນບຸກຄົນທີ່ສຳຄັນທີ່ສຸດໃນງານສົມຣົດນີ້ ແລະຖ້າຂາດບຸກຄົນນີ້ງານສົມຣົດກໍຈະບໍ່ມີຄວາມມ່ວນຊື່ນນັ້ນຄືພຣະເຢຊູກຣິສໂຕເຈົ້ານັ້ນເອງ. ເພາະສະນັ້ນ, ໃນຕອນຕົ້ນຂອງພຣະວໍລະສານພວກເຮົາຈຶ່ງບໍ່ຮູ້ຈັກແມ່ນໃຜເປັນເຈົ້າພາບ, ແມ່ນໃຜເປັນເຈົ້າບ່າວ, ແມ່ນໃຜເປັນເຈົ້າສາວ. ເພາະຜູ້ທີ່ເປັນເຈົ້າບ່າວແທ້ຈິງນັ້ນຄືອົງພຣະເຢຊູກຣິສໂຕເຈົ້ານັ້ນເອງ.

ແລະວັນນີ້, ງານວິວາຫະມຸງຄຸນນັ້ນກໍໄດ້ສືບຕໍ່ໃນມະຫາບູຊາມິຊຊາ. ເພາະທຸກຄັ້ງທີ່ພວກເຮົາມາຮ່ວມມະຫາບູຊາມິຊຊາກໍແມ່ນພວກເຮົາມາຮ່ວມງານວິວາຫະມຸງຄຸນຂອງພຣະເຢຊູເຈົ້າ. ພຣະອົງບໍ່ໄດ້ທຳອັດສະຈັນໃຫ້ນ້ຳກາຍເປັນເຫລົ້າອະງຸ່ນເໝືອນແຕ່ກ່ອນ ແຕ່ພຣະອົງທຳໃຫ້ເຂົ້າໜົມປັງແລະເຫລົ້າອະງຸ່ນກາຍເປັນເລືອດແລະເນື້ອຂອງພຣະອົງ ເພື່ອລໍ່ລ້ຽງຊີວິດວິນຍານຂອງພວກເຮົາ. ເພາະສະນັ້ນ, ພວກເຮົາຜູ້ຖືກເຊີນມາໃນງານລ້ຽງຈຶ່ງເປັນແຂກຜູ້ມີບຸນ, ຜູ້ມີຄວາມສຸກຄວາມມ່ວນຊື່ນ, ເພາະພວກເຮົາມີເຈົ້າບ່າວຜູ້ເປັນພຣະບຸດຂອງພຣະເຈົ້າ. ດັ່ງນັ້ນ, ທຸກຄັ້ງກ່ອນທີ່ພວກເຮົາຈະຮັບເອົາພຣະກາຍຂອງພຣະເຢຊູເຈົ້າເຂົ້າມາໃນຈິດໃຈຂອງພວກເຮົາ ພຣະສົງຈຶ່ງກ່າວວ່າ: ບຸນມະຫາລາບແກ່ບັນດາຜູ້ທີ່ໄດ້ຖືກເຊີນມາຮ່ວມໃນງານລ້ຽງຂອງພຣະຊຸມພານ້ອຍ.

ຂໍໃຫ້ງານລ້ຽງຂອງພຣະເຢຊູເຈົ້າ, ອັນແມ່ນມະຫາບູຊາມິຊຊານີ້ຊ່ວຍພວກເຮົາໃຫ້ເຫັນໄດ້ເຖິງການປະທັບຢູ່ຂອງພຣະອົງຢູ່ທ່າມກາງພວກເຮົາແລະເປັນຕົ້ນຢູ່ໃນຈິດໃຈຂອງພວກເຮົາແຕ່ລະຄົນ ເພື່ອພວກເຮົາຈະໄດ້ມີຄວາມມ່ວນຊື່ນແລະສັນຕິສຸກຂອງພຣະອົງຢູ່ໃນຊີວິດຈິດໃຈພວກເຮົາສະເໝີ. ອາແມນ.

ຄຸນພໍ່ ອັງຕວນ ກຽດຕິສັກ